# ສິງທ້າທາຍຂອງການສົ່ງເສີມກະສິກຳສີຂຽວ: ຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບ




Andrew Bartlett
*Team Leader and Policy Adviser*
*Lao Upland Rural Advisory Service*

Lao Uplands Conference
Luang Prabang
13th March 2018

ບໍລິການ-ສົ່ງເສີມກະສິກຳຮອບດ້ານ ບສກຮ
LURAS Lao Upland Rural Advisory Service

# ປະຫວັດຄວາມເປັນມາ

- ຝຸ່ນຊີວະພາບໄດ້ເລີ່ມສົ່ງເສີມໂດຍຜູ້ຊ່ຽວຊານລາວທີ່ເຮັດວຽກຮ່ວມກັບ Quaker Services ລາວ (QSL) ໃນຊຸມປີ 1980 .
- ໃນປີຕໍ່ມາ, ໃນປີ 1991 ມີອົງການ NGO ຈຳນວນໜຶ່ງໄດ້ຈັດກອງປະຊຸມກະສິກຳຍືນຍົງ (SAF) ເພື່ອເປັນກົນໄກສຳລັບການແບ່ງປັນປະສົບການ.
- ໃນປີ 1992, ອົງການ UNDP / FAO ເລີ່ມຕົ້ນໂຄງການຝຶກອົບຮົມຊາວນາດ້ານການເຮັດກະເສດສຸມ(FIAT), ເຊິ່ງໄດ້ຝຶກອົບຮົມໃຫ້ຊາວກະສິກອນຫລາຍກ່ວາ 6,000 ຄົນ ແລະ ຜະລິດຄູ່ມືການສົ່ງເສີມໄດ້ 10 ຄູ່ມື.
- ປີ 1993 ໄດ້ມີການຈັດກອງປະຊຸມເຂດພູດອຍຂອງລາວ ຂຶ້ນເປັນຄັ້ງທຳອິດ. ກອງປະຊຸມໄດ້ຈັດຂຶ້ນທີ່ ນາບົງ ແລະ ໄດ້ຜະລິດ ເອກະສານຫລາຍກວ່າ 20 ສະບັບ ເຊິ່ງລວມເຖິງເອກະສານກ່ຽວກັບ "ປະສົບການຕ່າງໆຂອງການສົ່ງເສີມທີ່ແນະນຳກ່ຽວກັບລະບົບກະສິກຳຍືນຍົງໃນເຂດພູດອຍ"
- ໃນປີ 1996 ລາວໄດ້ເຂົ້າຮ່ວມໃນໂຄງການຂອງ ອົງການ ອາຫານ ແລະ ການກະເສດລະດັບພາກພື້ນ ສຳລັບ IPM, ເຊິ່ງໄດ້ນຳສະເຫນີວິທີການປະຕິບັດແບບໂຮງຮຽນຊາວນາ.
- ປີ 2001 ແມ່ນປີທີ່ສຳຄັນອີກປີໜຶ່ງ ທີ່ໄດ້ເລີ່ມມີການທົດລອງລະບົບການປູກເຂົ້າແບບນາກ້າກົບດຽວ (SRI), ແລະການສ້າງຕັ້ງໂຄງການນິເວດກະສິກຳ ແຫ່ງຊາດ (PRONAE), ທີ່ອອກແບບມາເພື່ອສົ່ງເສີມການກະສິກຳໃນເຊີງອະນຸລັກ (CA).

# ການພັດທະນາທີ່ຍືນຍົງບໍ່?

- ໃນປີ 2002 – 15ປີ ກ່ອນ - ກະຊວງກະສິກຳ ແລະ ປ່າໄມ້ ແລະ ຄູ່ຮ່ວມພັດທະນາໄດ້ມີການນຳສະເໜີກ່ຽວກັບກະສິກຳຍືນຍົງເຊັ່ນ: ການເຮັດນາກ້າກິບດຽວ, ການຈັດການສັດຕູພືດແບບປະສົມປະສານ ແລະ ການກະສິກຳອະນຸລັກ ແລະ ອື່ນໆ.
- ພວກເຮົາໄດ້ມີການຝຶກອົບຮົມໃຫ້ແກ່ບັນດາຄູຝຶກ, ສ້າງຄູ່ມືການສົ່ງເສີມຕ່າງໆ ແລະ ສ້າງຕາໜ່າງ ຫຼື ເຄືອຂ່າຍ.
- ບັນດາຜູ້ຈັດຕັ້ງປະຕິບັດກະສິກຳຍືນຍົງຢູ່ຊຽງຂວາງສະຫຼູບອອກມາວ່າ ພວກເຂົາຮູ້ວ່າຈະເຮັດແນວໃດ.
- ມັນມີເຫດຜົນທີ່ຈະຖາມ: ພວກເຮົາຍັງຕ້ອງການໂຄງການສົ່ງເສີມເພີ່ມບໍ່? ເຮັດຄົ້ນຄວ້າເພີ່ມອີກບໍ່? ຈັດຝຶກອົບຮົມຕື່ມບໍ່?  ຂໍ້ແນະນຳທາງນະໂຍບາຍເພີ່ມບໍ່?
- ມັນຈະແຈ້ງແລ້ວ, ແນວໃດກໍ່ດີ, ຍັງມີຄວາມຈຳເປັນບາງຢ່າງຕ້ອງໄດ້ເຮັດ
- ມີການສ້າງຄວາມສາມາດໃຫ້ພະນັກງານເຖິງ 30ປີແລ້ວກໍ່ຕາມ, ບັນຫາ 'ສານຜິດຕົກຄ້າງ' ຍັງມີຄວາມຮ້າຍແຮງຂຶ້ນໃນຊຸມປີຜ່ານມາ
- ນີ້ເຮັດໃຫ້ເກີດຄຳຖາມ: ພວກເຮົາເຮັດເລື່ອງນີ້ໄປຖືກທາງແລ້ວບໍ່?

ໂຄງການສົ່ງເສີມກະສິກຳຮອບດ້ານ ບສກຮ
LURAS Lao Upland Rural Advisory Service

# ບັນຫາຕ່າງໆກ່ຽວກັບ '*ໂຄງການຂອງຂ້ອຍ*'

- ໂຄງການພັດທະນາຕ່າງໆແມ່ນໄດ້ຊ່ວຍສ້າງຄວາມອາດສາມາດໃຫ້ແກ່ວຽກງານການສົ່ງເສີມຢູ່ໃນລາວ, ແຕ່ພ້ອມດຽວກັນນັ້ນພວກເຂົາກໍ່ຍັງໄດ້ກີດຂວາງການສ້າງລະບົບການບໍລິການ-ສົ່ງເສີມທີ່ໜ້າເຊື່ອຖືໄດ້ ແລະ ເປັນປົກກະຕິໃຫ້ແກ່ຊາວກະສິກອນ.
- ບາງບັນຫາຂອງການພັດທະນາກະສິກຳທີ່ຂັບເຄື່ອນໂດຍໂຄງການ :
  - <u>ຊາວກະສິກອນຂອງຂ້ອຍ:</u> ການຈັດຕັ້ງປະຕິບັດຍັງກະແຈກກະຈາຍ ແລະ ບໍ່ສະໝໍ່າສະເໝີ; ມີຊ່ອງຫວ່າງຕ່າງໆ ແລະ ມີການຊໍ້າຊ້ອນ, ມີການເລືອກປະຕິບັດ, ມີການທົດລອງຫຼາຍອັນທີ່ບໍ່ສາມາດຜັນຂະຫຍາຍອອກສູ່ວົງກວ້າງ.
  - <u>ວິທີການຂອງຂ້ອຍ:</u> ຄວາມບໍ່ຈະແຈ້ງຂອງຜູ້ໃຫ້ທຶນ ແລະ NGO ຕ່າງໆ, ຈັດຕັ້ງປະຕິບັດພໍໃຜພໍລາວ, ມີການສ້າງຄໍາສັບ ແລະ ວິທີການຄືນໃໝ່ເລື້ອຍ; ຄວາມເປັນເຈົ້າການຂອງທ້ອງຖິ່ນຈໍາກັດ.
  - <u>ກຳນົດເວລາຂອງຂ້ອຍ:</u> ເປັນໂຄງການໄລຍະສັ້ນທີ່ສຸມໃສ່ແຕ່ການຈັດຕັ້ງປະຕິບັດ ແທນທີ່ຈະເນັ້ນໃສ່ວິທີການທີ່ສາມາດແກ້ໄຂບັນຫາທັງໝົດລະບົບ; ໃຊ້ເວລາດົນໂພດໃນ 'ການກະກຽມເບື້ອງຕົ້ນ'; ມີການຊັບປ່ຽນໝູນວຽນພະນັກງານເປັນປະຈໍາ.
  - <u>ງົບປະມານຂອງຂ້ອຍ:</u> ການໃຫ້ທຶນເລີ່ມ-ຢຸດເຊົາ (ບໍ່ຕໍ່ເນື່ອງ); ກົນໄກການປະຕິບັດວຽກງານຕ່າງໆແມ່ນອີງໃສ່ຂັ້ນເທິງ (ລໍຖ້າຄໍາສັ່ງ) ແລະ ລະບົບການເກື້ອກູນ; ມັນເປັນຄືກັບເຮັດທຸລະກິດ..., ມີສັນຍາ, ຊັບສິນຕ່າງໆ.
  - <u>ຄວາມສໍາເລັດຂອງຂ້ອຍ:</u> ຄວາມຮັບຜິດຊອບຕໍ່ຂັ້ນເທິງ, ການເວົ້າເຖິງແຕ່ໝາກຜົນ ແຕ່ການຕໍານິຕິຊົມຕົນເອງແມ່ນມີຈໍາກັດ; ການປະສານງານບໍ່ເຂັ້ມແຂງໃນຊ່ວງການວາງແຜນ ແລະ ມີການເຮັດວຽກຮ່ວມກັນໜ້ອຍໃນການຈັດຕັ້ງປະຕິບັດ.

# ໃຜເຮັດວຽກໃຫ້ໃຜ?

- ການຂາດຄວາມເປັນເຈົ້າການ ໂດຍທົ່ວໄປແລ້ວແມ່ນໃຊ້ເປັນເຫດຜົນເພື່ອອະທິບາຍການບໍ່ປະສົບຄວາມສຳເລັດ:
  - ຊາວກະສິກອນຂາດຄວາມເປັນເຈົ້າການໃນກຸ່ມຕ່າງໆທີ່ພວກເຂົາເຂົ້າຮ່ວມ (ກຸ່ມທີ່ຕັ້ງຂຶ້ນໂດຍໂຄງການ)
  - ພະນັກງານແຂວງ ຫຼື ເມືອງ ຂາດຄວາມເປັນເຈົ້າການໃນການນຳໃຊ້ເຄື່ອງມື ແລະ ວິທີການຕ່າງໆ (ເຄື່ອງມືທີ່ຖືກແນະນຳໂດຍໂຄງການ)
  - ພະນັກງານຂັ້ນສູນກາງຂາດຄວາມເປັນເຈົ້າການໃນຜັນຂະຫຍາຍຍຸດທະສາດຕ່າງໆ (ທີ່ຂຽນໂດຍໂຄງການ)
- ແຕ່ຄວາມເປັນເຈົ້າການຕ້ອງໄປພ້ອມໆກັບຄວາມຮັບຜິດຊອບ. ການເຮັດວຽກຂອງຊາວກະສິກອນແມ່ນເພື່ອລັດຖະບານ ຫຼື ວ່າໃນທາງກັບກັນ? ພະນັກງານພາກສະໜາມ ແມ່ນເຮັດວຽກເພື່ອສະໜັບສະໜູນໂຄງການ ຫຼື ວ່າໃນທາງກັບກັນ?
- ເຖິງແມ່ນວ່າຈະມີການນຳໃຊ້ວິທີການແບບມີສ່ວນຮ່ວມຢ່າງແຜ່ຫລາຍ, ແຕ່ໂຄງການຕ່າງໆຍັງຄົງຄາດຫວັງໃຫ້ມີການປ່ຽນແປງທາງພຶດຕິກຳ ເພື່ອໃຫ້ສອດຄ່ອງກັບສິ່ງທີ່ໄດ້ມີການຕັດສິນຈາກຂັ້ນເທິງ (ທີ່ລະບຸໃນແບບແຜນການເຮັດວຽກ, ນະໂຍບາຍ, ຄູ່ມື ແລະອື່ນໆ)
- ຫຼາຍທົດສະວັດຂອງການສົ່ງເສີມທີ່ໄດ້ໃຊ້ຮູບແບບຈາກເທິງລົງລຸ່ມ, ແຕ່ນີ້ແມ່ນວິທີການອອກແບບຂອງໂຄງການພັດທະນາສ່ວນໃຫຍ່.

# ບັນຫາບູລິມະສິດຂອງທ້ອງຖິ່ນ

- ການສົ່ງເສີມແມ່ນເປັນເຄື່ອງມືໃນການປະຕິບັດນະໂຍບາຍຂອງລັດ. ມີຄວາມເຂົ້າໃຈທີ່ຜິດພາດຕໍ່ກັບການສົ່ງເສີມທີ່ວ່າ ຊາວກະສິກອນແມ່ນເປັນລູກຄ້າທີ່ຕ້ອງມີຄວາມຮັບຜິດຊອບຕໍ່ນັກສົ່ງເສີມ. ແຕ່ຄວາມເປັນຈິງແມ່ນພວກເຂົາເຮັດວຽກໃຫ້ແກ່ລັດຖະບານ, ແລະໃນລະບົບການແບ່ງຂັ້ນຄຸ້ມຄອງ ແມ່ນພວກເຂົາເຮັດວຽກໃຫ້ແກ່ລັດຖະບານຂັ້ນທ້ອງຖິ່ນ.
- ຖ້າບູລິມະສິດຂອງລັດຖະບານທ້ອງຖິ່ນແມ່ນເພື່ອສົ່ງເສີມການລົງທຶນ ແລະ ສ້າງລາຍຮັບຈາກການເກັບພາສີ, ພວກເຮົາບໍ່ສາມາດຄາດຫວັງໄດ້ວ່ານັກສົ່ງເສີມຈະສຸມໃສ່ການເອື້ອອໍານວຍແກ່ການພັດທະນາລະບົບການຜະລິດຍືນຍົງ (ຫຼື ການຄໍ້າປະກັນສະບຽງອາຫານ, ຫຼື ຊີວະນານາພັນ, ຫຼື ຄວາມເທົ່າທຽມບົດບາດຍິງ-ຊາຍ ຫຼື ອື່ນໆ).
- ປະສົບການຢູ່ໃນຊຽງຂວາງສະແດງໃຫ້ເຫັນວ່າມີຄວາມສາມາດໃຫ້ແກ່ການສົ່ງເສີມກະສິກໍາສີຂຽວ. ຖ້າຢາກໃຫ້ຄວາມສາມາດນີ້ຖືກນໍາໃຊ້ຢ່າງມີປະສິດທິພາບຫຼາຍຂຶ້ນ, ແຂວງ ແລະ ເມືອງຈໍາເປັນຕ້ອງກໍານົດບູລິມະສິດຕົນເອງ ມັນຈະດີກວ່າການເຮັດຕາມບູລິມະສິດຂອງໂຄງການທີ່ມາໆ, ແລະ ກໍ່ໄປຢູ່ຕະຫຼອດ.
- ການຈັດບູລິມະສິດແມ່ນໄດ້ສະທ້ອນໃຫ້ເຫັນໃນຖະແຫຼງການຕໍ່ສາທະລະນະຊົນ, ຕົວຊີ້ວັດການປະຕິບັດງານ, ການຈັດສັນຊັບພະຍາກອນ, ມີການຊຸກຍູ້ ແລະ ມາດຕະການການຄຸ້ມຄອງ

ບໍລິການ-ສົ່ງເສີມກະສິກໍາຮອບດ້ານ ບສກຮ
LURAS Lao Upland Rural Advisory Service

# ແນ່ນອນພວກເຮົາສາມາດເຮັດໃຫ້ດີຂຶ້ນ!

- ຂ້າພະເຈົ້າຫວັງວ່າຜູ້ເຂົ້າຮ່ວມກອງປະຊຸມຈະມີແນວຄວາມຄິດວ່າ ເຮັດແນວໃດພວກເຮົາຈະສາມາດເຮັດການສົ່ງເສີມກະສິກຳຍືນຍົງໃຫ້ດີຂຶ້ນ.
- ທາງເລືອກໜຶ່ງແທນການພັດທະນາທີ່ຂັບເຄື່ອນໂດຍໂຄງການ ແມ່ນການນຳໃຊ້ຮູບແບບທີ່ອີງໃສ່ແຜນງານ (PBA). ປະສົບການໃນລາວແມ່ນຍັງບໍ່ທັນໄດ້ຮັບຜົນຫຼາຍພໍ, ບາງທີອາດຈະແມ່ນຍ້ອນ 'ແຜນງານ' ແມ່ນເຮັດໃຫຍ່ເກີນໄປ.
- ປະເທດລາວແມ່ນມີປະສົບການໃນການພັດທະນາ **ເຄື່ອຂ່າຍຊາວກະສິກອນ** ແລະ ການຮຽນຮູ້ລະຫວ່າງຊາວກະສິກອນ. ນີ້ແມ່ນຊ່ອງທາງທີ່ຈະຂະຫຍາຍການສົ່ງເສີມກະສິກຳສີຂຽວແມ່ນບໍ່? ໃນເວລາທີ່ມີໂຄງການ ຫຼື ບໍ່ມີໂຄງການສະໜັບສະໜູນ? ຊາວກະສິກອນສາມາດໃຫ້ການບໍລິການແກ່ພວກເຂົາເອງໄດ້ບໍ່?
- ໃນປະເທດອື່ນໆ, ໄດ້ມີການທົດລອງກ່ຽວກັບການນຳໃຊ້ລະບົບບັດ ທີ່ໃຫ້ຊາວກະສິກອນໃຊ້ເພື່ອຈ່າຍຄ່າບໍລິການ. ຂັ້ນຕອນຕໍ່ໜ້າອາດຈະປ່ຽນເປັນການໂອນເງິນສົດໂດຍກົງ, ເຖິງວ່າສິ່ງນີ້ຍັງບໍ່ທັນຈະແຈ້ງເທື່ອວ່າມັນຈະສາມາດຊ່ວຍຊາວກະສິກອນໄດ້ແນວໃດໃນການກ້າວໄປສູ່ນິເວດກະສິກຳ.
- ນອກຈາກນັ້ນພວກເຮົາກໍ່ມີພາກສ່ວນເອກະຊົນ. ພວກເຂົາມີບົດບາດຫຍັງແດ່? ບໍລິສັດມີແຕ່ຕ້ອງການຂາຍປັດໃຈຂາເຂົ້າ ແລະ ຊື້ຜົນຜະລິດເທົ່ານັ້ນບໍ ຫຼື ພວກເຂົາສາມາດເຮັດຫຍັງໄດ້ຕື່ມເພື່ອສະໜັບສະໜູນການພັດທະນາລະບົບການຜະລິດທີ່ມີປະສິດທິພາບ, ດີຕໍ່ສຸຂະພາບ ແລະ ມີຄວາມຍຸຕິທຳ?.

# ຊອກຫາແນວຄວາມຄິດທີ່ດີ

*ສຳລັບການແບ່ງກຸ່ມສົນທະນາ*

- ຈັດເປັນກຸ່ມ 3 ຄົນ ແລະ ສົນທະນາຕາມບັນຫາເຫຼົ່ານີ້ ເປັນເວລາ 15 ນາທີ: :
  - ພວກເຮົາຈະສືບຕໍ່ການບໍລິການສົ່ງເສີມກະສິກຳສີຂຽວແນວໃດຫລັງຈາກໂຄງການໄດ້ສິ້ນສຸດລົງແລ້ວ?
  - ນອກຈາກໂຄງການແລ້ວ ມີທາງເລືອກໃດແດ່ທີ່ຕ້ອງເອົາໃຈໃສ່ໃນການພັດທະນາກະສິກຳເຂດພູດອຍ?
  - ຕ້ອງເຮັດແນວໃດເພື່ອຊຸກຍູ້ໃຫ້ອຳນາດການປົກຄອງທ້ອງຖິ່ນ ໃຫ້ບູລິມະສິດກະສິກຳຍືນຍົງ ແລະ ຈັດສັນຊັບພະຍາກອນທີ່ຈຳເປັນ?
- ຂຽນແນວຄວາມຄິດພຽງໜຶ່ງອັນໃສ່ບັດຄຳ ຈະເປັນພາສາລາວ ຫລື ອັງກິດກໍ່ໄດ້.
- ສັງລວມບັດຄຳ ແລະ ຈະມີການເລືອກເອົາບາງບັດຄຳມາອ່ານໃນເວທີສົນທະນາ.
- ບັດຄຳທັງໝົດຈະໄດ້ຕິດໃສ່ກະດານ. ຜູ້ເຂົ້າຮ່ວມທັງໝົດແມ່ນສາມາດໃຫ້ຄະແນນແຕ່ລະແນວຄວາມຄິດໃນຊ່ວງອາຫານທ່ຽງ (ໃຫ້ຄະແນນດ້ວຍ 😊 ຕໍ່ແນວຄວາມຄິດດີເລີດ).